**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ ເລກທີ 557 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 06 ກຸມພາ 2018

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ

## ຂອງກົມພະລະ ແລະ ສິລະປະສຶກສາ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 67/ນຍ, ລົງວັນທີ 3 ກຸມພາ 2017;
- ອີງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

**ໝວດທີ 1**

**ບົດບັນຍັດທົ່ວໄປ**

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ , ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ແລະ ແບບແຜນວິທີເຮັດວຽກ ຂອງກົມພະລະ ແລະ ສິລະປະສຶກສາ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ແນໃສ່ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ, ແຜນພັດທະນາວຽກງານພະລະ ແລະ ສິລະປະສຶກສາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມພະລະ ແລະ ສິລະປະສຶກສາ ຂຽນດ້ວຍຕົວອັກສອນຫຍໍ້ **''ພປ''**''ເປັນກົງຈັກບໍລິຫານ-ຄຸ້ມຄອງວິຊາການ ຢູ່ໃນໂຄງປະກອບກົງຈັກການຈັດຕັ້ງ ຂອງກະຊວງສຶກສາທິການ ແລະ ກິລາ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ ລັດຖະມົນຕີ ກ່ຽວກັບວຽກງານພະລະສຶກສາ, ສິລະປະສຶກສາ, ສຶກສາປ້ອງກັນຕົວ, ຕ້ານສິ່ງເສບຕິດໃນໂຮງຮຽນ, ຈັດການແຂ່ງຂັນກິລາ ແລະ ສິລະປະນັກຮຽນ ໃນແຕ່ລະຊັ້ນ ແຕ່ລະສາຍ ທັງພາກລັດ ແລະ ເອກະຊົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມພະລະ ແລະ ສິລະປະສຶກສາ ມີໜ້າທີ່ຕົ້ນຕໍ່ດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງ ຂອງພັກ, ກົດໝາຍຂອງລັດ, ທິດທາງແຜນການ ແລະ ຍຸດທະສາດຂອງ ກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງເປັນແຜນພັດທະນາວຽກງານຂອງຕົນ;
2. ຄົ້ນຄວ້າສ້າງ, ປັບປຸງ ນິຕິກຳ ແລະ ມາດຕະຖານຕ່າງໆ ເພື່ອຄຸ້ມຄອງການສ້າງຄູພະລະສຶກສາ, ຄູສິລະປະສຶກສາ, ວຽກງານພະລະ ແລະ ສິລະປະສຶກສາ;
3. ຊີ້ນຳ ການສ້າງຄວາມເຂັ້ມແຂງ ໃນການບຳລຸງ, ຍົກລະດັບ, ຝຶກອົບຮົມ ໃຫ້ຄູ ແລະ ຜູ້ຮັບຜິດຊອບວຽກງານພະລະ ແລະ ສິລະປະສຶກສາ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ;
4. ສ້າງແຜນກໍ່ສ້າງຄູ ແລະ ບຳລຸງຄູພະລະສຶກສາ ແລະ ຄູສິລະປະສຶກສາ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;
5. ຊີ້ນຳ ແລະ ຄຸ້ມຄອງ ການສ້າງ ແລະ ພັດທະນາຫຼັກສູດ , ປຶ້ມຄູ່ມື, ເອກະສານສື່ການຮຽນ-ການສອນ ເພື່ອຮັບໃຊ້ການສ້າງ ແລະ ບຳລຸງຄູພະລະສຶກສາ, ຄູສິລະປະສຶກສາ;
6. ຊີ້ນຳການຈັດ ການຮຽນ-ການສອນ ພະລະສຶກສາ, ສິລະປະສຶກສາ ແລະ ສຶກສາປ້ອງກັນຕົວ ໃນສາຍສາມັນ, ອາຊີວະສຶກສາ, ການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ;
7. ຊີ້ນຳ, ຊຸກຍູ້ ຂະບວນການເຄື່ອນໄຫວ ຝຶກແອບ, ແຂ່ງຂັນກິລາ, ສິລະປະ ພາຍໃນໂຮງຮຽນ ແລະ ແລະ ຕ້ານສິ່ງເສບຕິດ ທັງໃນ ແລະ ນອກໂຮງຮຽນ,
8. ຊຸກຍູ້, ສົ່ງເສີມ ການສ້າງ ແລະ ປະຕິບັດຫຼັກສູດທ້ອງຖິ່ນ ກ່ຽວກັບວຽກງານພະລະ ແລະ ສິລະປະສຶກສາ;
9. ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການສ້າງ, ພັດທະນາຫຼັກສູດ ພະລະສຶກສາ, ສິລະປະສຶກສາ ແລະ ສຶກສາປ້ອງກັນຕົວຮັບໃຊ້ສາຍສາມັນສຶກສາ, ວິທະຍາໄລຄູ, ອາຊີວະສຶກສາ ແລະ ມະຫາວິທະຍາໄລ;
10. ຈັດງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ເຂົ້າຮ່ວມແຂ່ງຂັນກິລານັກຮຽນສາມັນອາຊຽນ ແລະ ສາກົນ;
11. ຊີ້ນຳ ແລະ ຄຸ້ມຄອງ ວິທະຍາໄລພະລະສຶກສາ, ວິທະຍາໄລສິລະປະສຶກສາ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ປະສານສົມທົບການສ້າງຄູພະລະສຶກສາ, ຄູສິລະປະສຶກສາ ກັບກົມສ້າງຄູ;
12. ສ້າງຖານຂໍ້ມູນໃນການຄຸ້ມຄອງວຽກງານພະລະ ແລະ ສິລະປະສຶກສາ ໂດຍອີງໃສ່ມາດຕະຖານການຄຸ້ມຄອງຂໍ້ມູນຂະແໜງການສຶກສາທິການ ແລະ ກິລາ;
13. ພົວພັນ ແລະ ປະສານງານກັບຫ້ອງການ , ກົມ, ອົງການເທົ່າກົມ, ສະຖາບັນ, ສູນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ເອກະຊົນ ຕາມການມອບໝາຍຂອງຂັ້ນເທິງ;
14. ກວດກາ, ຕິດຕາມ ແລະ ປະເມີນຜົນ ວຽກງານພະລະ ແລະ ສິລະປະສຶກສາ;
15. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງລັດຖະມົນຕີ.

**ມາດຕາ 4 ຂອບເຂດສິດ**

1. ສະເໜີແຜນການ ແລະ ແຜນງົບປະມານເພື່ອພັດທະນາວຽກງານທີ່ຕົນຮັບຜິດຊອບຕໍ່ລັດຖະມົນຕີ;
2. ສະເໜີລັດຖະມົນຕີ ພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກຳຄຸ້ມຄອງການສຶກສາ ແລະ ກິລາທີ່ບໍ່ສອດຄ່ອງ;
3. ສະເໜີຕໍ່ລັດຖະມົນຕີ ພິຈາລະນາ, ອະນຸມັດ, ສ້າງຕັ້ງ ຫຼື ຍົກເລີກ ພະແນກຕ່າງໆ ທີ່ຂຶ້ນກັບກົມ;
4. ສະເໜີລັດຖະມົນຕີ ແຕ່ງຕັ້ງ, ປົດຕຳແໜ່ງ, ສັບຊ້ອນ ຫຼື ຍົກຍ້າຍ ພະນັກງານບໍລິຫານຂັ້ນຕ່າງໆ ຕາມລະບຽບກົດໝາຍ;
5. ຄຸ້ມຄອງ, ນຳໃຊ້ງົບປະມານ, ວັດຖຸ-ຊັບສິນ, ກອງທຶນ, ທຶນຊ່ວຍເຫຼືອປະເພດຕ່າງໆ ຕາມການອະນຸມັດຂອງລັດຖະມົນຕີ;
6. ປະຕິບັດໂຄງການຊ່ວຍເຫລືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸມັດຂອງລັດຖະມົນຕີ;
7. ສະເໜີລັດຖະມົນຕີປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ, ລິຂະສິດທາງດ້ານການສຶກສາ ແລະ ກິລາ ຕາມການແບ່ງຂັ້ນຄຸ້ມຄອງ;
8. ປະຕິບັດວຽກງານອື່ນ ຕາມການມອບໝາຍຂອງລັດຖະມົນຕີ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງກົມພະລະ ແລະ ສິລະປະສຶກສາ ປະກອບດ້ວຍ 4 ພະແນກ ຄື:

1. ພະແນກບໍລິຫານ;
2. ພະແນກພະລະສຶກສາ;
3. ພະແນກສິລະປະສຶກສາ;
4. ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ ແລະ ຕຳແໜ່ງງານ**

ກົມພະລະ ແລະ ສິລະປະສຶກສາ ມີບຸກຄະລາກອນ ຈຳນວນ 31 ຕຳແໜ່ງ ລາຍລະອຽດດັ່ງລຸ່ມນີ້:

1. ຫົວໜ້າກົມ 1 ຕຳແໜ່ງ;
2. ຮອງຫົວໜ້າກົມ 3 ຕຳແໜ່ງ;
3. ຫົວໜ້າພະແນກ 4 ຕຳແໜ່ງ;
4. ຮອງຫົວໜ້າພະແນກ 6 ຕຳແໜ່ງ;
5. **ພະນັກງານວິຊາການ 17 ຕຳແໜ່ງ ໃນນັ້ນສັງກັດຢູ່:**
   - ພະແນກບໍລິຫານ 3 ຕຳແໜ່ງ;
   - ພະແນກພະລະສຶກສາ 5 ຕຳແໜ່ງ ;
   - ພະແນກສິລະປະສຶກສາ 5 ຕຳແໜ່ງ;
   - ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ 4 ຕຳແໜ່ງ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງພະແນກບໍລິຫານ**

ພະແນກບໍລິຫານ ມີໜ້າທີ່ດັ່ງນີ້:

1. ເປັນເສນາທິການ, ເປັນຜູ້ປະສານງານ, ປະຕິບັດໜ້າທີ່ເປັນເລຂານຸການ ແລະ ເປັນບ່ອນບໍລິຫານໃຫ້ແກ່ກົມກ່ຽວກັບວຽກງານບໍລິຫານຮອບດ້ານຢູ່ພາຍໃນກົມ ແລະ ວິທະຍາໄລທີ່ຂຶ້ນກັບ;
2. ຄົ້ນຄວ້າສ້າງລະບຽບ ແລະ ນິຕິກຳຕ່າງໆຂອງກົມ ໂດຍສົມທົບກັບພະແນກການທີ່ກ່ຽວຂ້ອງ;
3. ຄຸ້ມຄອງເອກະສານ ແລະ ວຽກງານສາລະບັນຂາເຂົ້າ-ຂາອອກທັງໝົດຂອງກົມ ໂດຍຜ່ານປະຕູດຽວ;
4. ສັງລວມ, ວາງແຜນ ແລະ ປະເມີນຜົນ ການປະຕິບັດແຜນງົບປະມານ, ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍຂອງກົມ;
5. ສັງລວມບົດສະຫຼຸບ ແລະ ແຜນການຂອງພະແນກອື່ນໆ ເພື່ອສ້າງເປັນບົດສະຫຼຸບ ແລະ ແຜນການຂອງກົມ;
6. ຄຸ້ມຄອງຂຶ້ນບັນຊີຊັບສິນ, ພາຫະນະ, ວັດສະດຸ, ອຸປະກອນ ແລະ ບຸກຄະລາກອນຂອງກົມ;
7. ສ້າງ ແລະ ປັບປຸງຄູ່ມືວິທີການເຮັດວຽກ ແລະ ການກຳນົດຕຳແໜ່ງງານຂອງກົມ;
8. ສະຫຼຸບ ແລະ ວາງແຜນການຂອງພະແນກເປັນແຕ່ລະໄລຍະ;
9. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ.

**ມາດຕາ 8 ໜ້າທີ່ຂອງພະແນກພະລະສຶກສາ**

ພະແນກພະລະສຶກສາ ມີໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກົມກ່ຽວກັບ ວຽກງານພະລະສຶກສາ, ກິລາໃນໂຮງຮຽນ ແລະ ສຶກສາປ້ອງກັນຕົວ;
2. ຊີ້ນຳ ແລະ ຈັດຕັ້ງການພັດທະນາຫຼັກສູດ, ເອກະສານ, ປຶ້ມຕຳລາ, ປຶ້ມຄູ່ມື, ສື່ການຮຽນ-ການສອນ ແລະ ນິຕິກຳຕ່າງໆ ຮັບໃຊ້ສາຍສ້າງຄູພະລະສຶກສາ;
3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງຫຼັກສູດວິຊາພະລະສຶກສາ ສາຍສາມັນສຶກສາ ແລະ ຄູ່ມືການຝຶກອົບຮົມທັກສະດ້ານການຮຽນ-ການສອນໃຫ້ຄູໃນທຸກຊັ້ນ, ທຸກສາຍທັງພາກລັດ ແລະ ເອກະຊົນ;
4. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງຫຼັກສູດ, ປຶ້ມຄູ່ມື, ນິຕິກຳຕ່າງໆ ຮັບໃຊ້ການຮຽນ-ການສອນສຶກສາປ້ອງກັນຕົວໃນໂຮງຮຽນມັດທະຍົມຕອນປາຍ, ວິທະຍາໄລ, ອາຊີວະສຶກສາ, ສະຖາບັນສຶກສາຊັ້ນສູງ, ມະຫາວິທະຍາໄລ ທັງພາກລັດ ແລະ ເອກະຊົນ ແລະ ສ້າງເອກະສານ, ຄູ່ມືຮັບໃຊ້ການເຝິກອົບຮົມໃຫ້ແກ່ ຄະນະຮັບຜິດຊອບ, ຄູສອນສຶກສາປ້ອງກັນຕົວ;
5. ຄົ້ນຄວ້າຜັນຂະຫຍາຍດຳລັດ, ມະຕິຄຳສັ່ງຂອງສູນກາງ ເພື່ອຈັດຕັ້ງປະຕິບັດການຮຽນ-ການສອນວຽກງານສຶກສາປ້ອງກັນຕົວ ທົ່ວປວງຊົນ;
6. ສ້າງແຜນກໍ່ສ້າງຄູ, ບຳລຸງ ແລະ ຍົກລະດັບ ເຝິກອົບຮົມຄູພະລະສຶກສາ ນັບທັງຜູ້ຮັບຜິດຊອບວຽກງານພະລະສຶກສາ;

7. ຊີ້ນຳ, ຊຸກຍູ້ສົ່ງເສີມການສ້າງສະຖານທີ່, ອຸປະກອນສຳລັບການສິດສອນ, ການຝຶກແອບພະລະສຶກສາ-ກິລາ, ກາຍະບໍລິຫານ ແລະ ຂະບວນການການເຄື່ອນໄຫວແຂ່ງຂັນກິລານັກຮຽນໃນທຸກຊັ້ນ ທຸກສາຍທັງພາກລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດ;
8. ສົມທົບກັບພະແນກທີ່ກ່ຽວຂ້ອງ, ວິທະຍາໄລພະລະສຶກສາ ເພື່ອຕິດຕາມ ແລະ ປະເມີນຜົນ ແຜນພັດທະນາວຽກງານພະລະສຶກສາ ແລະ ກິລາໃນໂຮງຮຽນ;
9. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກວດກາສະມັດຖະພາບດ້ານຮ່າງກາຍ ຂອງນັກຮຽນແຕ່ລະໄວອາຍຸໃນຂອບເຂດທົ່ວປະເທດ;
10. ສົມທົບກັບກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອແລກປ່ຽນບົດຮຽນທັງພາຍໃນ ແລະ ຕ່າງປະເທດ;
11. ຄົ້ນຄວ້າຊອກແຫຼ່ງທຶນການຊ່ວຍເຫຼືອ, ແລກປ່ຽນບົດຮຽນທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານພະລະສຶກສາ ແລະ ສຶກສາປ້ອງກັນຕົວ;
12. ປະຕິບັດວຽກງານອື່ນໆຕາມການມອບໝາຍ.

**ມາດຕາ 9 ໜ້າທີ່ຂອງພະແນກສິລະປະສຶກສາ**

ພະແນກສິລະປະສຶກສາ ມີໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ກົມ ກ່ຽວກັບວຽກງານສິລະປະສຶກສາ, ຂະບວນການຕ້ານສິ່ງເສບຕິດໃນໂຮງຮຽນ ແລະ ການສົ່ງເສີມການພັດທະນາຫຼັກສູດທ້ອງຖິ່ນ;
2. ຊີ້ນຳ ແລະ ຈັດຕັ້ງການພັດທະນາຫຼັກສູດ, ເອກະສານ, ປຶ້ມຕຳລາ, ປຶ້ມຄູ່ມື, ສື່ການຮຽນ-ການສອນ, ນິຕິກຳຕ່າງໆ ຮັບໃຊ້ສາຍສ້າງຄູສິລະປະສຶກສາ;
3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງຫຼັກສູດວິຊາສິລະປະສຶກສາ ສາຍສາມັນສຶກສາ ແລະ ຄູ່ມືການຝຶກອົບຮົມທັກສະດ້ານການຮຽນ-ການສອນໃຫ້ຄູໃນທຸກຊັ້ນ, ທຸກສາຍທັງພາກລັດ ແລະ ເອກະຊົນ;
4. ຄົ້ນຄວ້າ, ພັດທະນາເອກະສານ, ຄູ່ມືຮັບໃຊ້ການຝຶກອົບຮົມ, ປຶ້ມແບບຮຽນ, ປຶ້ມອ່ານເສີມ, ສື່ໂຄ ສະນາຕ່າງໆ ຮັບໃຊ້ໃຫ້ແກ່ການຕ້ານສິ່ງເສບຕິດ ແລະ ການພັດທະນາຫຼັກສູດທ້ອງຖິ່ນ;
5. ຄົ້ນຄວ້າຜັນຂະຫຍາຍ, ຈັດຕັ້ງປະຕິບັດມະຕິຄຳສັ່ງຂອງກົມ ແລະ ຂອງ ກະຊວງສຶກສາທິການ ແລະ ກິລາ ເພື່ອຕ້ານ ແລະ ສະກັດກັ້ນສິ່ງເສບຕິດ ໃນໂຮງຮຽນ ແລະ ການສົ່ງເສີມພູມປັນຍາທ້ອງຖິ່ນ;
6. ສ້າງແຜນກໍ່ສ້າງຄູ, ບຳລຸງ ແລະ ຍົກລະດັບຄູສິລະປະສຶກສາ ນັບທັງຜູ້ຮັບຜິດຊອບວຽກງານດັ່ງກ່າວ ແລະ ຈັດຝຶກອົບຮົມພະນັກງານ, ຄູອາຈານ, ຫົວໜ້າໜວດເດັກອາສາສະໝັກ, ນັກຮຽນນັກສຶກສາ, ຜູ້ປົກຄອງນັກຮຽນ ແລະ ຊຸມ ຊົນໃນການຕ້ານສິ່ງເສບຕິດ ແລະ ພັດທະນາຫຼັກສູດທ້ອງຖິ່ນໃນຂອບເຂດທົ່ວປະເທດ;
7. ຊີ້ນຳ, ຊຸກຍູ້ ແລະ ກຳນົດໃຫ້ມີສະຖານທີ່ສຳລັບການສິດສອນສິລະປະສຶກສາ, ຝຶກແອບສິລະປະວັນນະຄະດີ, ຈັດການແຂ່ງຂັນໃນໂຮງຮຽນ, ສ້າງຂະບວນການ ແລະ ຊ່ວຍເຫຼືອທາງດ້ານວິຊາການກ່ຽວກັບການຕ້ານສິ່ງເສບຕິດໃນໂຮງຮຽນ ແລະ ການປະຕິບັດຫຼັກສູດທ້ອງຖິ່ນ;
8. ສົມທົບກັບພະແນກທີ່ກ່ຽວຂ້ອງ, ວິທະຍາໄລສິລະປະສຶກສາ ເພື່ອຕິດຕາມ ແລະ ປະເມີນຜົນແຜນພັດທະນາວຽກງານສິລະປະວັນນະຄະດີໃນໂຮງຮຽນ;

9. ຄົ້ນຄວ້າຊອກແຫຼ່ງທຶນການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານສິລະປະສຶກສາ, ວຽກງານຕ້ານສິ່ງເສບຕິດໃນໂຮງຮຽນ ແລະ ພັດທະນາຫຼັກສູດທ້ອງຖິ່ນ;
10. ປະຕິບັດວຽກງານອື່ນໆຕາມການມອບໝາຍ.

**ມາດຕາ 10 ໜ້າທີ່ຂອງພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ**

ພະແນກກວດກາ, ຕິດຕາມ ແລະ ປະເມີນຜົນ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນການດຳເນີນການປະເມີນຜົນແຜນຍຸດທະສາດ, ແຜນດຳເນີນງານຂອງກົມ ເປັນຕົ້ນແມ່ນວຽກງານພະລະສຶກສາ, ສິລະປະສຶກສາ, ສຶກສາປ້ອງກັນຕົວ, ຕ້ານສິ່ງເສບຕິດໃນໂຮງຮຽນ ແລະ ການພັດທະນາຫຼັກສູດທ້ອງຖິ່ນ;
2. ສະຫຼຸບຜົນການປະຕິບັດການປະເມີນຜົນວຽກງານຕ່າງໆ ຂອງກົມ ເພື່ອລາຍງານຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບ;
3. ດຳເນີນການກວດກາຄຸນນະພາບວຽກງານສ້າງຄູພາຍໃນ ວິທະຍາໄລພະລະສຶກສາ ແລະ ວິທະຍາໄລສິລະປະສຶກສາ;
4. ກວດກາ, ຕິດຕາມ, ປະເມີນຜົນ ແລະ ວິໄຈບັນຫາ ກ່ຽວກັບການຮຽນ-ການສອນວິຊາພະລະສຶກສາ, ວິຊາສິລະປະສຶກສາ ແລະ ສຶກສາປ້ອງກັນຕົວ ຢູ່ໃນໂຮງຮຽນສາມັນສຶກສາ, ວິທະຍາໄລຄູ, ອາຊີວະສຶກສາ, ສະຖາບັນການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລທັງພາກລັດ ແລະ ເອກະຊົນ;
5. ຄຸ້ມຄອງ, ພັດທະນາຖານຂໍ້ມູນ, ເກັບກຳສະຖິຕິພະນັກງານ, ຄູສອນພະລະ ແລະ ສິລະປະສຶກສາ;
6. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ.

## ໝວດທີ 5

## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 11 ຫຼັກການ**

ກົມພະລະ ແລະ ສິລະປະສຶກສາ ເຄື່ອນໄຫວວຽກງານຕາມຫຼັກການດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂ ະຫຍາຍຫົວຄິດປະດິດສ້າງຂອງພະນັກງານ, ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວກົມພະລະ ແລະ ສິລະປະສຶກສາ ແມ່ນອີງໃສ່ລະບຽບກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ, ລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 12 ແບບແຜນວິທີເຮັດວຽກ**

ກົມພະລະ ແລະ ສິລະປະສຶກສາ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແບບແຜນ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະ

2. ກັນການຈັດຕັ້ງປະຕິບັດວຽກງານພະລະ ແລະ ສິລະປະສຶກສາ ໃຫ້ໄດ້ຮັບຜົນດີ;
3. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີ ລາຄາຜົນໄດ້ຮັບ, ຜົນເສຍ;
4. ປະຕິບັດລະບອບປະຊຸມປະຈໍາເດືອນ, 3 ເດືອນ, 6 ເດືອນ ຫຼື ປະ ຈໍາປີ ແລະ ປະ ຕິບັດລະບອບລາຍງານ ໃຫ້ຂັ້ນເທິງ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 13 ງົບປະມານ ແລະ ຕາປະທັບ**

ກົມພະລະ ແລະ ສິລະປະສຶກສາ ມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານຂອງກະຊວງສຶກສາທິການ ແລະ ກິລາ, ການຊ່ວຍເຫຼືອ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ແລະ ມີຕາປະທັບເພື່ອຮັບໃຊ້ວຽກງານທາງລັດຖະການ.

**ມາດຕາ 14 ການຜັນຂະຫຍາຍ**

ມອບໃຫ້ກົມພະລະ ແລະ ສິລະປະສຶກສາ ກໍານົດໜ້າທີ່, ກິດຈະກໍາລະອຽດ ແລະ ກໍານົດມາດຕະຖານແຕ່ລະຕໍາແໜ່ງງານ ເພື່ອນໍາສະເໜີລັດຖະມົນຕີບັນຈຸ ແລະ ສັບຊ້ອນພະນັກງານເຂົ້າໃສ່ຕໍາແໜ່ງງານຕາມຄວາມເໝາະສົມ.

**ມາດຕາ 15 ການຈັດຕັ້ງປະຕິບັດ**

ບັນດາ ຫ້ອງການ, ກົມ, ອົງການທຽບເທົ່າ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນ ຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 837/ສສກ.ຈຕ, ລົງວັນທີ 19 ມີນາ 2012. ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆ ຊຶ່ງປະກາດໃຊ້ໃນ ເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນຖືກລົບລ້າງ.

**ລັດຖະມົນຕີ**

ກະຊວງສຶກສາທິການແລະກິລາ
ລັດຖະມົນຕີ

**ນ.ແສງເດືອນ ຫຼ້າຈັນທະບູນ**

**ບ່ອນນໍາສົ່ງ:**

| | |
|---|---|
| 1. ກະຊວງພາຍໃນ | 1 ສະບັບ. |
| 2. ຫ້ອງການກະຊວງ | 1 ສະບັບ. |
| 3. ບັນດາກົມ, ສູນ ແລະ ສະຖາບັນພາກສ່ວນລະ | 1 ສະບັບ . |
| 4. ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພາກສ່ວນລະ | 1 ສະບັບ. |
| 5. ພາກສ່ວນທີ່ກ່ຽວຂ້ອງ | 3 ສະບັບ. |
| 6. ເກັບມ້ຽນ | 3 ສະບັບ. |